# ຍຸດທະສາດພັດທະນາພະນັກງານສາທາລະນະສຸກ ຮອດ ປີ 2020

ກົມຈັດຕັ້ງ-ພະນັກງານ
ກະຊວງສາທາລະນະສຸກ
ພະຈິກ 2010

ພລສ
ກະຊວງສາທາລະນະສຸກ
ກົມແຜນການ ງົບປະມານ
ໂຄງການພັດທະນາລະບົບສາທາລະນະສຸກ
Health System Development Porject
ADB Grant 0079-lao (SF)
HSD

ສະໜັບສະໜູນໂດຍໂຄງການພັດທະນາລະບົບສາທາລະນະສຸກ

# ຄຳນຳ

ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ແລະ ທີ VIII ຂອງສູນກາງພັກປະຊາຊົນປະຕິວັດລາວ ໄດ້ວາງຄາດໝາຍໃຫ້ປະເທດຊາດ ຫລຸດພົ້ນອອກຈາກຄວາມດ້ອຍພັດທະນາ ໃນປີ 2020 ແລະ ຮັບປະກັນໃຫ້ຄົນລາວທຸກຄົນ ໄດ້ເຂົ້າເຖິງການບໍລິການສຸຂະພາບ ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.

ຍຸດທະສາດການພັດທະນາຊັບພະຍາກອນມະນຸດຮອດປີ 2020 ກຳນົດຈຸດໝາຍລວມວ່າ: "ສ້າງຄົນລາວໃຫ້ກາຍເປັນພົນລະເມືອງດີ, ມີນ້ຳໃຈຮັກຊາດ ຮັກລະບອບປະຊາທິປະໄຕ ປະຊາຊົນລາວ ຍຶດໝັ້ນໃນອຸດົມຄະຕິ ສັງຄົມນິຍົມ, ສັດຊື່ບໍລິສຸດ, ມີລະບຽບວິໄນ ແລະ ເຄົາລົບກົດໝາຍ, ຮູ້ປະຕິບັດພັນທະໜ້າທີ່ຂອງຕົນ, ມີຄວາມສູ້ຊົນ ກ້າເວົ້າກ້າຕັດສິນໃຈ, ກ້າຮັບຜິດຊອບຕໍ່ໜ້າທີ່ການໃນຍຸກໂລກາພິວັດ, ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ-ວິຊາການ, ຮູ້ພາສາຕ່າງປະເທດ ແລະ ຄອມພິວເຕີ ຮູ້ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ທັງເປັນຄົນດຸໝັ່ນ, ພາກພຽນ, ມັກການອອກແຮງງານ ແລະ ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ມັກຊອກຮູ້ຮ່ຳຮຽນ ແລະ ປະຢັດມັດທະຍັດ, ມີສຸຂະພາບພະລານະໄມສົມບູນ ທາງດ້ານຮ່າງກາຍ ແລະ ຈິດໃຈ, ມີຄວາມເຂັ້ມແຂງທົນທານຕໍ່ສະພາບແວດລ້ອມ, ມີເອກະລັກວັດທະນະທຳຂອງຊາດລາວ ແລະ ມີຄວາມສີວິໄລທາງດ້ານຈິດໃຈ ຄືມີນ້ຳໃຈມະນຸດສະທຳ, ຍຸດຕິທຳ, ສາມັກຄີເອື້ອເຟື້ອເພື່ອແຜ່ ແລະ ມີຄວາມມັກຄວາມນິຍົມອັນຖືກຕ້ອງ, ກ້າວໜ້າ ແລະ ວິທະຍາສາດ".

ກະຊວງສາທາລະນະສຸກ ໄດ້ວາງຄາດໝາຍລວມຂອງຂະແໜງການສາທາລະນະສຸກ ຮອດປີ 2020 ຕ້ອງມີພະນັກງານນຳພາ, ພະນັກງານຄຸ້ມຄອງທີ່ໜັກແໜ້ນ, ເກັ່ງທັງມີປະສິດທິພາບ ແລະ ພະນັກງານວິຊາການຄົບທຸກວິຊາຕາມຈຳນວນທີ່ຕ້ອງການ ແລະ ມີຄວາມສາມາດໃນລະດັບຂົງເຂດ.

ຕັ້ງແຕ່ປີ 2001 ເປັນຕົ້ນມາ ກະຊວງສາທາລະນະສຸກ ໄດ້ມີຄວາມພະຍາຍາມຍົກສູງຄຸນນະພາບ ຂອງພະນັກງານສາທາລະນະສຸກ ດ້ານຄຸນສົມບັດ, ຈັນຍາທຳ, ນ້ຳໃຈ, ທ່າທີການຮັບໃຊ້ ແລະ ມີຄວາມຮູ້ຄວາມສາມາດດ້ານວິຊາການ ເພື່ອຮັບປະກັນການສະໜອງການບໍລິການທີ່ມີຄຸນນະພາບ ໂດຍການສ້າງແຜນແມ່ບົດສາທາລະນະສຸກ ຊຶ່ງໄດ້ຮັບການສະໜັບສະໜູນຈາກອົງການຮ່ວມມືສາກົນຂອງຍີ່ປຸ່ນ (ໄຈກາ), ໄດ້ຈັດກອງປະຊຸມຢູ່ແຕ່ລະພາກ ເພື່ອຊອກເຫັນສິ່ງທ້າທາຍ ແລະ ກຳນົດຄວາມຕ້ອງການດ້ານການພັດທະນາພະນັກງານສາທາລະນະສຸກ. ກະຊວງສາທາລະນະສຸກໄດ້ ອອກຄຳສັ່ງ 2 ສະບັບ ກ່ຽວກັບພະນັກງານຫຼັກຂອງໂຮງໝໍແຂວງ, ໂຮງໝໍເມືອງ ແລະ ສຸກສາລາ, ໄດ້ອອກກົດໝາຍວ່າດ້ວຍການປິ່ນປົວໃນ ເດືອນທັນວາ ປີ 2005. ໃນປີ 2007 ໄດ້ວິໄຈສະພາບພະນັກງານສາທາລະນະສຸກ ໃນ ສປປ ລາວ ຮ່ວມກັບອົງການອະນາໄມໂລກ ຊຶ່ງເປັນພື້ນຖານໃຫ້ແກ່ການສ້າງຍຸດທະສາດ ພັດທະນາພະນັກງານສາທາລະນະສຸກ. ແຕ່ທ້າຍປີ 2008 ເປັນຕົ້ນມາ ດ້ວຍການສະໜັບສະໜູນຂອງໂຄງການພັດທະນາລະບົບສາທາລະນະສຸກ (ທຶນຊ່ວຍເຫຼືອລ້າຂອງທະນະຄານພັດທະນາອາຊີ), ຍຸດທະສາດພັດທະນາພະນັກງານສາທາລະນະສຸກ ດັ່ງກ່າວ ໄດ້ຜ່ານການປຶກສາຫາລືຢ່າງເປັນເອກະພາບ ພາຍໃນຂະແໜງການສາທາລະນະສຸກ, ມີການປະກອບສ່ວນຈາກຂະແໜງການອ້ອມຂ້າງສູນກາງ ເປັນຕົ້ນຄະນະເລຂາທິການລັດຖະບານ, ກະຊວງສຶກສາທິການ, ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະ